ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ລັດຖະບານ — ເລກທີ 639 /ລບ

ນະຄອນຫຼວງວຽງຈັນ, ວັນທີ 19 / 11 / 24

# ດໍາລັດ
# ວ່າດ້ວຍກອງທຶນ ຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ ສະບັບເລກທີ 03/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ກົດໝາຍວ່າດ້ວຍຢາເສບຕິດ ສະບັບເລກທີ 10/ສພຊ, ລົງວັນທີ 25 ທັນວາ 2007;
- ອີງຕາມ ໜັງສືສະເໜີ ຂອງກະຊວງປ້ອງກັນຄວາມສະຫງົບ ສະບັບເລກທີ 397/ປກສ, ລົງວັນທີ 08 ພະຈິກ 2024;

## ລັດຖະບານ ອອກດໍາລັດ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ດໍາລັດສະບັບນີ້ ກໍານົດຫຼັກການ, ລະບຽບການ ກ່ຽວກັບການ ຄຸ້ມຄອງ, ນໍາໃຊ້ ແລະ ກວດກາ ກອງທຶນ ຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ ເພື່ອລະດົມ ແລະ ສະສົມ ທຶນ ຈາກພາຍໃນ ແລະ ຕ່າງປະເທດແນໃສ່ສະໜອງທຶນໃຫ້ແກ່ວຽກງານ ຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ ໃຫ້ມີຄວາມຍືນຍົງ, ໂປ່ງໃສ ແລະ ສາມາດກວດສອບໄດ້ ປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ.

**ມາດຕາ 2 ກອງທຶນ ຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ**

ກອງທຶນ ຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ ຂຽນຫຍໍ້ວ່າ "ກສຢ" ເປັນພາສາອັງກິດວ່າ Drugs Control Fund "DCF" ແມ່ນ ກອງທຶນທີ່ສ້າງຂຶ້ນ ເພື່ອສະສົມ ແລະ ລະດົມທຶນ ຈາກແຫຼ່ງຕ່າງໆ ທັງພາຍໃນ ແລະ ຕ່າງປະເທດ ເພື່ອຮັບປະກັນໃຫ້ມີງົບປະມານພຽງພໍ, ຍືນຍົງ ແລະ ນໍາໃຊ້ເຂົ້າໃນວຽກງານຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສດຕິດ.

**ມາດຕາ 3 ຫຼັກການຄຸ້ມຄອງ ແລະ ນໍາໃຊ້ ກອງທຶນ ຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ**

ການຄຸ້ມຄອງ ແລະ ນໍາໃຊ້ ກສຢ ຕ້ອງປະຕິບັດຕາມຫຼັກການ ດັ່ງນີ້:

1. ຄຸ້ມຄອງຢ່າງລວມສູນ ແລະ ເປັນເອກະພາບ ຕາມລະບົບງົບປະມານແຫ່ງລັດ ໃນຂອບເຂດທົ່ວປະເທດ;
2. ຮັບປະກັນການນໍາໃຊ້ກອງທຶນໃຫ້ຖືກຕ້ອງຕາມເປົ້າໝາຍ, ມີປະສິດທິພາບ ແລະ ປະສິດທິຜົນ;

3. ຮັບປະກັນຄວາມຖືກຕ້ອງ, ວ່ອງໄວ, ທັນສະໄໝ, ຍຸຕິທຳ, ໂປ່ງໃສ ແລະ ສາມາດກວດສອບໄດ້;

4. ທຸກລາຍຮັບ, ລາຍຈ່າຍ ຕ້ອງຜ່ານລະບົບການບັນທຶກບັນຊີ ຢ່າງເປັນປົກກະຕິ ຕາມກົດໝາຍ ແລະ ລະບຽບການ;

5. ຮັບປະກັນການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ.

## ໝວດທີ 2
## ແຫຼ່ງລາຍຮັບ ແລະ ການນຳໃຊ້ກອງທຶນ

### ມາດຕາ 4 ແຫຼ່ງລາຍຮັບຂອງກອງທຶນ

ແຫຼ່ງລາຍຮັບຂອງ ກສຢ ໄດ້ມາຈາກ:

1. ງົບປະມານແຫ່ງລັດ ຕາມການຈັດສັນງົບປະມານປະຈຳປີ;

2. ການປະມູນຂາຍ ຊັບສິນ, ພາຫະນະ, ວັດຖຸປະກອນ, ຄ່າເຊົ່າ ຫຼື ສຳປະທານ ຊັບສິນ ແລະ ເງິນຝາກ ທີ່ສານປະຊາຊົນຕັດສິນຮິບ ຊຶ່ງພົວພັນກັບການດຳເນີນຄະດີກ່ຽວກັບຢາເສບຕິດ ລວມທັງຄ່າປັບໃໝທາງອາຍາ ກ່ຽວກັບຄະດີດັ່ງກ່າວ;

3. ການຂາຍຜະລິດຕະພັນຂອງສູນ ປິ່ນປົວ, ຟື້ນຟູສຸຂະພາບ ແລະ ຝຶກວິຊາຊີບ ໃຫ້ຜູ້ຕິດຢາເສບຕິດ;

4. ການຊ່ວຍເຫຼືອຈາກຕ່າງປະເທດ ແລະ ອົງການຈັດຕັ້ງສາກົນ;

5. ການປະກອບສ່ວນຂອງ ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ;

6. ດອກເບ້ຍເງິນຝາກ ຂອງກອງທຶນ;

7. ການເຄື່ອນໄຫວກິດຈະກຳທາງສັງຄົມ;

8. ລາຍຮັບອື່ນ ທີ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ.

### ມາດຕາ 5 ການແບ່ງປັນລາຍຮັບທີ່ໄດ້ຈາກການດຳເນີນຄະດີກ່ຽວກັບຢາເສບຕິດ

ລາຍຮັບທີ່ໄດ້ຈາກການດຳເນີນຄະດີຢາເສບຕິດ ຕ້ອງຈົດຮັບເຂົ້າງົບປະມານແຫ່ງລັດ ຕາມທີ່ໄດ້ກຳນົດໄວ້ ໃນກົດໝາຍ ວ່າດ້ວຍງົບປະມານແຫ່ງລັດ ແລ້ວໃຫ້ແບ່ງປັນ ດັ່ງນີ້:

1. ຂັ້ນສູນກາງ:
   - ສາມສິບສ່ວນຮ້ອຍ (30%) ມອບເຂົ້າງົບປະມານແຫ່ງລັດ;
   - ເຈັດສິບສ່ວນຮ້ອຍ (70%) ມອບເຂົ້າ ກສຢ ຂັ້ນສູນກາງ.

2. ຂັ້ນແຂວງ:
   - ສາມສິບສ່ວນຮ້ອຍ (30%) ມອບເຂົ້າງົບປະມານຂອງແຂວງ, ນະຄອນຫຼວງ;
   - ສິບສ່ວນຮ້ອຍ (10%) ມອບເຂົ້າ ກສຢ ຂັ້ນສູນກາງ;
   - ຫົກສິບສ່ວນຮ້ອຍ (60%) ມອບເຂົ້າ ກສຢ ຂັ້ນແຂວງ.

ການມອບລາຍຮັບທີ່ໄດ້ຈາກການດຳເນີນຄະດີຢາເສບຕິດ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ທີ 1 ແລະ ຂໍ້ທີ 2 ຂອງມາດຕານີ້ ເຂົ້າງົບປະມານແຫ່ງລັດ ແລະ ກອງທຶນ ກສຢ ຕ້ອງດຳເນີນພາຍໃນກຳນົດເວລາ 60 ວັນ ພາຍຫຼັງປະມູນຂາຍ ຫຼື ເກັບລາຍຮັບ.

### ມາດຕາ 6 ເປົ້າໝາຍການນຳໃຊ້ກອງທຶນ

ກສຢ ໃຫ້ນຳໃຊ້ເຂົ້າໃນເປົ້າໝາຍ ດັ່ງນີ້:

1. ການຄົ້ນຄວ້າ ສ້າງ, ປັບປຸງ, ນະໂຍບາຍ, ຍຸດທະສາດ, ກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງກັບ ຢາເສບຕິດ;

2. ໂຄສະນາ ເຜີຍແຜ່ ແລະ ສຶກສາອົບຮົມ ນະໂຍບາຍ, ຍຸດທະສາດ, ກົດໝາຍ ແລະ ລະບຽບການ ເພື່ອສ້າງຈິດສຳນຶກໃຫ້ທົ່ວສັງຄົມຮັບຮູ້ ແລະ ເຂົ້າໃຈເຖິງຜົນຮ້າຍຂອງຢາເສບຕິດ;

3. ການປະຕິບັດວຽກງານວິຊາສະເພາະ ກ່ຽວກັບການດຳເນີນຄະດີຢາເສບຕິດ ລວມທັງການປະຕິບັດຄຳຕັດສິນຂອງສານ;

4. ການປິ່ນປົວ, ຟື້ນຟູສຸຂະພາບ ແລະ ຝຶກວິຊາຊີບເບື້ອງຕົ້ນ ໃຫ້ແກ່ຜູ້ຕິດຢາເສບຕິດ;

5. ການຄົ້ນຄວ້າວິໄຈ ກ່ຽວກັບຢາເສບຕິດ, ສານເຄມີທີ່ຖືກຄວບຄຸມການນຳໃຊ້ ແລະ ຕົວຢ່າງຢາເສບຕິດ ທີ່ຍຶດໄດ້ຈາກຜູ້ກະທຳຜິດ ເພື່ອປະກອບສຳນວນຄະດີ;

6. ການປະຕິບັດນະໂຍບາຍຕໍ່ເຈົ້າໜ້າທີ່ ທີ່ມີຜົນງານດີເດັ່ນ ແລະ ຕໍ່ຜູ້ໄດ້ຮັບເຄາະຮ້າຍ ຈາກການປະຕິບັດໜ້າທີ່ສະກັດກັ້ນ ແລະ ຕ້ານຢາເສບຕິດ ລວມທັງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ໃຫ້ການປະກອບ ສ່ວນຢ່າງຕັ້ງໜ້າ ໃນການແກ້ໄຂບັນຫາຢາເສບຕິດ ຕາມລະບຽບການ;

7. ການສົ່ງເສີມ, ຊຸກຍູ້ ໃຫ້ປະຊາຊົນຫັນ ປ່ຽນໄປປະກອບອາຊີບອື່ນ ແທນການປູກພືດ ທີ່ມີສານເສບຕິດ;

8. ການຝຶກອົບຮົມສ້າງຄວາມເຂັ້ມແຂງ ກ່ຽວກັບການຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ ໃຫ້ແກ່ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;

9. ການບູລະນະ ໂຄງລ່າງພື້ນຖານ ເປັນຕົ້ນ ສູນປິ່ນປົວຜູ້ຕິດຢາເສບຕິດ, ສູນວິໄຈຢາເສບຕິດ, ສາງເກັບມ້ຽນຢາເສບຕິດ; ຈັດຊື້ ແລະ ສ້ອມແປງ ເຄື່ອງວັດຖຸປະກອບ ຮັບໃຊ້ວຽກງານວິຊາສະເພາະ;

10. ການຕິດຕາມ ກວດກາ, ປົກປັກຮັກສາ ວັດຖຸເຄື່ອງຂອງກາງທີ່ ຍຶດ, ອາຍັດ ລວມທັງການເຄື່ອນຍ້າຍຊັບມາຮັກສາໄວ້ໃນສາງ ແລະ ການທຳລາຍຢາເສບຕິດ;

11. ວຽກງານບໍລິຫານກອງທຶນ, ການປຸກລະດົມຂົນຂວາຍ ແລະ ຊອກຫາແຫຼ່ງທຶນ ເພື່ອປະກອບເຂົ້າກອງທຶນ.

ລາຍລະອຽດຂອງການນຳໃຊ້ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 7 ການຖອນເງິນຂອງກອງທຶນ**

ການຖອນເງິນອອກຈາກບັນຊີເງິນຝາກຂອງ ກສຢ ຕ້ອງປະຕິບັດຕາມ ແຜນການ, ແຜນງານ, ໂຄງການທີ່ຖືກຮັບຮອງໂດຍສະພາບໍລິຫານ ກສຢ, ຖືກຕ້ອງຕາມລະບຽບການຂອງກອງທຶນ ແລະ ລະບຽບການທີ່ກ່ຽວ ຂ້ອງ. ການຖອນເງິນ ຂອງ ກສຢ ແຕ່ລະຄັ້ງ ຕ້ອງຖອນດ້ວຍ ແຊັກ ທີ່ມີລາຍເຊັນ ຂອງຜູ້ທີ່ໄດ້ຮັບມອບສິດຈາກສະພາບໍລິຫານ ກສຢ.

ການອະນຸຍາດຖອນເງິນອອກຈາກບັນຊີເງິນຝາກ ຂອງກອງທຶນ ບໍ່ໃຫ້ເກີນລາຍຮັບທັງໝົດຂອງກອງທຶນໃນແຕ່ລະປີງົບປະມານ.

ການຖອນເງິນກອງທຶນ ບໍ່ສາມາດຖອນໄດ້ໝົດ ແລະ ຕ້ອງຮັກສາໄວ້ ສິບ ສ່ວນຮ້ອຍ ໃນບັນຊີເງິນຝາກຂອງກອງທຶນ.

## ໝວດທີ 3
## ການຄຸ້ມຄອງບໍລິຫານກອງທຶນ

**ມາດຕາ 8 ທີ່ຕັ້ງຂອງກອງທຶນ ຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ**

ກສຢ ແຕ່ລະຂັ້ນ ມີທີ່ຕັ້ງ ດັ່ງນີ້:

1. ຂັ້ນສູນກາງ ຕັ້ງຢູ່ ກະຊວງປ້ອງກັນຄວາມສະຫງົບ;
2. ຂັ້ນແຂວງ ຕັ້ງຢູ່ ກອງບັນຊາການປ້ອງກັນຄວາມສະຫງົບ ແຂວງ, ນະຄອນຫຼວງ.

**ມາດຕາ 9 ໂຄງປະກອບການຈັດຕັ້ງຂອງກອງທຶນ ຂັ້ນສູນກາງ**

ໂຄງປະກອບການຈັດຕັ້ງຂອງ ກສຢ ຂັ້ນສູນກາງ ມີ ດັ່ງນີ້:

1. ສະພາບໍລິຫານ ກສຢ;
2. ກອງເລຂາ ກສຢ.

**ມາດຕາ 10 ສະພາບໍລິຫານກອງທຶນ ຂັ້ນສູນກາງ**

ສະພາບໍລິຫານ ກສຢ ຂັ້ນສູນກາງ ແມ່ນ ອົງການທີ່ບໍ່ປະຈຳການ ມີພາລະບົດບາດຮັບຜິດຊອບການເຄື່ອນໄຫວວຽກງານຂອງ ກສຢ ຂັ້ນສູນກາງ. ສະພາບໍລິຫານຂອງ ກສຢ ຂັ້ນສູນກາງ ປະກອບດ້ວຍ ປະທານ, ຮອງປະທານ ແລະ ຄະນະກຳມະການຈຳນວນໜຶ່ງ ທີ່ມາຈາກຂະແໜງການທີ່ກ່ຽວຂ້ອງ ຊຶ່ງຖືກແຕ່ງຕັ້ງໂດຍລັດຖະມົນຕີ ກະຊວງປ້ອງກັນຄວາມສະຫງົບ ຕາມການສະເໜີຂອງກົມໃຫຍ່ຕຳຫຼວດ.

ສະພາບໍລິຫານ ກສຢ ຂັ້ນສູນກາງ ມີອາຍຸການ ຫ້າ (5) ປີ.

**ມາດຕາ 11 ໂຄງປະກອບບຸກຄະລາກອນຂອງສະພາບໍລິຫານກອງທຶນຂັ້ນສູນກາງ**

ສະພາບໍລິຫານ ກສຢ ຂັ້ນສູນກາງ ມີໂຄງປະກອບບຸກຄະລາກອນ ດັ່ງນີ້:

1. ຮອງລັດຖະມົນຕີ ກະຊວງປ້ອງກັນຄວາມສະຫງົບ ເປັນປະທານ;
2. ຫົວໜ້າ ກົມໃຫຍ່ຕຳຫຼວດ ກະຊວງປ້ອງກັນຄວາມສະຫງົບ ເປັນຮອງປະທານ;
3. ຮອງຫົວໜ້າ ກົມໃຫຍ່ພະລາທິການ ກະຊວງປ້ອງກັນຄວາມສະຫງົບ ເປັນກຳມະການ;
4. ຫົວໜ້າຫ້ອງການ ກວດກາ ແລະ ຄວບຄຸມ ຢາເສບຕິດ ກົມໃຫຍ່ຕຳຫຼວດ ກະຊວງປ້ອງກັນຄວາມສະຫງົບ ເປັນກຳມະການ;
5. ຫົວໜ້າ ກົມຕຳຫຼວດສະກັດກັ້ນ ແລະ ຕ້ານຢາເສບຕິດ ກົມໃຫຍ່ຕຳຫຼວດ ກະຊວງປ້ອງກັນຄວາມສະຫງົບ ເປັນກຳມະການ;
6. ຫົວໜ້າ ກົມຄຸ້ມຄອງຊັບສິນແຫ່ງລັດ ກະຊວງການເງິນ ເປັນກຳມະການ;
7. ຫົວໜ້າ ກົມຄຸ້ມຄອງການປະຕິບັດຄຳຕັດສິນຂອງສານ ກະຊວງຍຸຕິທຳ ເປັນກຳມະການ;
8. ຫົວໜ້າ ກົມຕິດຕາມກວດກາທົ່ວໄປ ອົງການໄອຍະການປະຊາຊົນສູງສຸດ ເປັນກຳມະການ;
9. ຫົວໜ້າ ກົມຄຸ້ມຄອງວິຊາການ ແລະ ສະຖິຕິສານ ສານປະຊາຊົນສູງສຸດ ເປັນກຳມະການ;
10. ຫົວໜ້າ ກົມຮ່ວມມືສາກົນ ກະຊວງແຜນການ ແລະ ການລົງທຶນ ເປັນກຳມະການ;
11. ຫົວໜ້າ ກົມປິ່ນປົວ ແລະ ຟື້ນຟູ ໜ້າທີ່ການ ກະຊວງສາທາລະນະສຸກ ເປັນກຳມະການ.

ໂຄງປະກອບບຸກຄະລາກອນ ຂອງ ສະພາບໍລິຫານ ກສຢ ສາມາດປັບປຸງ, ປ່ຽນແປງໄດ້ ຕາມຄວາມຈຳເປັນ ໂດຍການຕົກລົງ ຂອງລັດຖະມົນຕີກະຊວງປ້ອງກັນຄວາມສະຫງົບ.

ບຸກຄະລາກອນ ຂອງສະພາບໍລິຫານ ກສຢ ຈະບໍ່ໄດ້ຮັບເງິນເດືອນ ແລະ ຄ່າແຮງງານຈາກ ກສຢ ໃນການປະຕິບັດໜ້າທີ່ຂອງຕົນ. ສຳລັບ ເບ້ຍປະຊຸມ ແລະ ຄ່າສິ້ນເປືອງຕ່າງໆຂອງກອງປະຊຸມ ໃຫ້ປະຕິບັດຕາມລະບຽບການ ຂອງກະຊວງການເງິນ.

**ມາດຕາ 12 ສິດ ແລະ ໜ້າທີ່ ຂອງສະພາບໍລິຫານກອງທຶນ ຂັ້ນສູນກາງ**

ສະພາບໍລິຫານ ກສຢ ຂັ້ນສູນກາງ ມີສິດ ແລະ ໜ້າທີ່ ຕາມຂອບເຂດຂອງຕົນ ດັ່ງນີ້:

1. ຄຸ້ມຄອງ ແລະ ບໍລິຫານ ກສຢ ຂັ້ນສູນກາງ ເພື່ອຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດວາລະແຫ່ງຊາດແຜນຍຸດທະສາດ, ກົດໝາຍ, ນະໂຍບາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

2. ຕົກລົງ ການນຳໃຊ້ ກສຢ ຂັ້ນສູນກາງ ໃນຍາມປົກກະຕິ ແລະ ຮີບດ່ວນ ໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;

3. ຮັບຮອງເອົາ ແຜນງົບປະມານ ແລະ ແຜນການເຄື່ອນໄຫວວຽກງານປະຈຳປີ ຂອງ ກສຢ ຂັ້ນສູນກາງ ຕາມການສະເໜີຂອງກອງເລຂາ;

4. ຮັບຮອງເອົາ ລະບຽບການ ກ່ຽວກັບການຄຸ້ມຄອງ ແລະ ການເຄື່ອນໄຫວຂອງ ກສຢ ຂັ້ນສູນກາງ ຕາມການສະເໜີຂອງກອງເລຂາ;

5. ພິຈາລະນາຮັບຮອງເອົາບົດລາຍງານ ການເຄື່ອນໄຫວ, ແຜນ ລາຍຮັບ-ລາຍຈ່າຍ ກສຢ ຂັ້ນສູນກາງ ຕາມການສະເໜີຂອງກອງເລຂາ;

6. ແຕ່ງຕັ້ງ ກອງເລຂາ ກສຢ ຂັ້ນສູນກາງ ແລະ ພະນັກງານຊ່ວຍວຽກ;

7. ລະດົມຂົນຂວາຍ ແລະ ຊອກຫາແຫຼ່ງທຶນຈາກ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ພາຍໃນ ແລະ ຕ່າງປະເທດ;

8. ຕິດຕາມການ ກວດກາ, ກວດສອບ ຄຸ້ມຄອງການເຄື່ອນໄຫວ ແລະ ນຳໃຊ້ກອງທຶນ ໃນການບໍລິຫານຈັດການໃຫ້ຖືກຕ້ອງກັບແຜນການ ແລະ ສອດຄ່ອງກັບເປົ້າໝາຍນຳໃຊ້, ມີຄວາມໂປ່ງໃສ ແລະ ມີປະສິດທິຜົນສູງ;

9. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານຂອງ ກສຢ ຂັ້ນສູນກາງ ໃຫ້ການນຳຂັ້ນຂອງຕົນ ສອງຄັ້ງ ຕໍ່ ປີ;

10. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

## ມາດຕາ 13 ກອງເລຂາກອງທຶນ ຂັ້ນສູນກາງ

ກອງເລຂາ ກສຢ ຂັ້ນສູນກາງ ຕັ້ງຢູ່ ຫ້ອງການກວດກາ ແລະ ຄວບຄຸມ ຢາເສບຕິດ ກົມໃຫຍ່ຕຳຫຼວດ ກະຊວງປ້ອງກັນຄວາມສະຫງົບ ມີພາລະບົດບາດ ຊ່ວຍວຽກສະພາບໍລິຫານ ແລະ ຮັບຜິດຊອບໂດຍກົງ ໃນການຄຸ້ມຄອງບໍລິຫານ ກສຢ ຂັ້ນສູນກາງ.

ກອງເລຂາ ກສຢ ຂັ້ນສູນກາງ ປະກອບດ້ວຍຫົວໜ້າ, ຮອງຫົວໜ້າ ແລະ ພະນັກງານ ຈຳນວນໜຶ່ງ ຊຶ່ງຖືກແຕ່ງຕັ້ງ ຫຼື ປົດຕຳແໜ່ງ ໂດຍ ສະພາບໍລິຫານກອງທຶນ ຕາມການສະເໜີ ຂອງຫ້ອງການກວດກາ ແລະ ຄວບຄຸມຢາເສບຕິດ ກົມໃຫຍ່ຕຳຫຼວດ ກະຊວງປ້ອງກັນຄວາມສະຫງົບ.

ຫົວໜ້າກອງເລຂາ ກສຢ ຂັ້ນສູນກາງ ມີຄວາມຮັບຜິດຊອບໂດຍກົງ ຕໍ່ສະພາບໍລິຫານກ່ຽວກັບການຄຸ້ມຄອງບໍລິຫານ ກສຢ ຂັ້ນສູນກາງ, ຮອງຫົວໜ້າກອງເລຂາເປັນຜູ້ຊ່ວຍວຽກຫົວໜ້າກອງເລຂາ ແລະ ມີໜ້າທີ່ລົງເລິກຮັບຜິດຊອບວຽກງານໃດໜຶ່ງ ຕາມການມອບໝາຍຂອງຫົວໜ້າກອງເລຂາ.

## ມາດຕາ 14 ສິດ ແລະ ໜ້າທີ່ ຂອງກອງເລຂາກອງທຶນ ຂັ້ນສູນກາງ

ກອງເລຂາ ກສຢ ຂັ້ນສູນກາງ ປະຕິບັດສິດ ແລະ ໜ້າທີ່ ດັ່ງນີ້:

1. ເປັນເສນາທິການໃຫ້ສະພາບໍລິຫານໃນການຄຸ້ມຄອງບໍລິຫານ, ການເຄື່ອນໄຫວວຽກງານຂອງ ກສຢ ຂັ້ນສູນກາງ;

2. ໂຄສະນາ, ເຜີຍແຜ່ລະບຽບ ກ່ຽວກັບ ກສຢ;

3. ຄົ້ນຄວ້າ, ສ້າງກົດລະບຽບພາຍໃນ, ແຜນການເຄື່ອນໄຫວ ແລະ ແຜນງົບປະມານປະຈຳປີ ເພື່ອສະເໜີສະພາບໍລິຫານ ກສຢ ຂັ້ນສູນກາງ ພິຈາລະນາ ແລະ ຮັບຮອງ;

4. ຄົ້ນຄວ້າ, ສ້າງແຜນງານ, ໂຄງການ ແລະ ກິດຈະກຳ ເພື່ອສະເໜີຕໍ່ສະພາບໍລິຫານພິຈາລະນາ ແລະ ຮັບຮອງ;

5. ຈັດຕັ້ງ ກິດຈະກຳທາງສັງຄົມ, ລະດົມຂົນຂວາຍ ແລະ ຊອກຫາແຫຼ່ງທຶນ ເຂົ້າກອງທຶນ ທີ່ຖືກຕ້ອງຕາມກົດໝາຍ;

6. ຕິດຕາມ ກວດກາ ການເກັບກຳ, ຂຶ້ນບັນຊີ, ທ້ອນໂຮມຊັບສິນ ທີ່ກ່ຽວຂ້ອງ ກັບຄະດີຢາເສບຕິດ ທີ່ຖືກຍຶດ, ອາຍັດ ແລະ ຮິບເປັນຂອງລັດຕາມຄຳຕັດສິນຂອງສານ ທີ່ໃຊ້ໄດ້ຢ່າງເດັດຂາດ;

7. ສ້າງກົນໄກປະສານງານ, ປະສານສົມທົບກົມກອງວິຊາສະເພາະ ແລະ ພາກສ່ວນທີ່ກ່ຽວຂ້ອງ ໃນການແບ່ງປັນລາຍຮັບທີ່ໄດ້ຈາກການດໍາເນີນຄະດີ ກ່ຽວກັບຄະດີຢາເສບຕິດ;

8. ບັນທຶກ, ຈົດຮັບ, ຈົດຈ່າຍ ເງິນ ກສຢ ຂັ້ນສູນກາງ, ຄຸ້ມຄອງຊັບສິນ, ເງິນສົດ ແລະ ບັນຊີເງິນຝາກຂອງກອງທຶນບໍ່ໃຫ້ຕົກເຮ່ຍເສຍຫາຍ;

9. ເບີກຈ່າຍເງິນ ແລະ ວັດຖຸປະກອນ ເພື່ອສະໜອງໃຫ້ແກ່ກິດຈະກໍາຕ່າງໆ ຕາມແຜນການທີ່ສະພາບໍລິຫານກອງທຶນ ໄດ້ຮັບຮອງ;

10. ເຂົ້າຮ່ວມເປັນຄະນະກໍາມະການ ໃນການປະມູນຂາຍ ຊັບສິນທີ່ຖືກຮິບເປັນຂອງລັດ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;

11. ຕິດຕາມ, ກວດກາປະເມີນຜົນການນໍາໃຊ້ກອງທຶນ;

12. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານຂອງ ກສຢ ຂັ້ນສູນກາງ ຕໍ່ສະພາບໍລິຫານ ຢ່າງເປັນປົກກະຕິ;

13. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍ ຂອງສະພາບໍລິຫານກອງທຶນ.

## ມາດຕາ 15 ໂຄງປະກອບການຈັດຕັ້ງຂອງກອງທຶນ ຂັ້ນແຂວງ

ໂຄງປະກອບການຈັດຕັ້ງຂອງ ກສຢ ຂັ້ນແຂວງ ມີ ດັ່ງນີ້:

1. ສະພາບໍລິຫານ ກສຢ;
2. ກອງເລຂາ ກສຢ.

## ມາດຕາ 16 ສະພາບໍລິຫານກອງທຶນ ຂັ້ນແຂວງ

ສະພາບໍລິຫານ ກສຢ ຂັ້ນແຂວງ ແມ່ນ ອົງການທີ່ບໍ່ປະຈໍາການ ມີພາລະບົດບາດຮັບຜິດຊອບການເຄື່ອນໄຫວວຽກງານຂອງ ກສຢ ຂັ້ນແຂວງ. ສະພາບໍລິຫານຂອງ ກສຢ ຂັ້ນແຂວງ ປະກອບດ້ວຍ ປະທານ, ຮອງປະທານ ແລະ ຄະນະກໍາມະການຈໍານວນໜຶ່ງ ທີ່ມາຈາກຂະແໜງການທີ່ກ່ຽວຂ້ອງ ຊຶ່ງຖືກແຕ່ງຕັ້ງໂດຍຮອງລັດຖະມົນຕີກະຊວງປ້ອງກັນຄວາມສະຫງົບ, ປະທານສະພາບໍລິຫານກອງທຶນຂັ້ນສູນກາງ ຕາມການສະເໜີຂອງກອງບັນຊາການປ້ອງກັນຄວາມສະຫງົບ ແຂວງ, ນະຄອນຫຼວງ.

ສະພາບໍລິຫານ ກສຢ ຂັ້ນແຂວງ ມີອາຍຸການ ຫ້າ (5) ປີ.

## ມາດຕາ 17 ໂຄງປະກອບບຸກຄະລາກອນຂອງສະພາບໍລິຫານກອງທຶນ ຂັ້ນແຂວງ

ສະພາບໍລິຫານ ກສຢ ຂັ້ນແຂວງ ມີໂຄງປະກອບບຸກຄະລາກອນ ດັ່ງນີ້:

1. ຫົວໜ້າກອງບັນຊາການປ້ອງກັນຄວາມສະຫງົບ ແຂວງ, ນະຄອນຫຼວງ ເປັນປະທານ;
2. ຮອງຫົວໜ້າກອງບັນຊາການປ້ອງກັນຄວາມສະຫງົບ ແຂວງ, ນະຄອນຫຼວງ ເປັນຮອງປະທານ;
3. ຮອງຫົວໜ້າ ພະແນກການເງິນແຂວງ, ນະຄອນຫຼວງ ເປັນກໍາມະການ;
4. ຮອງຫົວໜ້າ ອົງການໄອຍະການປະຊາຊົນ ແຂວງ, ນະຄອນຫຼວງ ເປັນກໍາມະການ;
5. ຮອງປະທານ ສານປະຊາຊົນແຂວງ, ນະຄອນຫຼວງ ເປັນກໍາມະການ;
6. ຮອງຫົວໜ້າ ກອງປະຕິບັດຄໍາຕັດສິນຂອງສານ ຫຼື ຮອງຫົວໜ້າ ພະແນກຍຸຕິທໍາ ແຂວງ, ນະຄອນຫຼວງ ເປັນກໍາມະການ;
7. ຫົວໜ້າ ພະແນກ ຕໍາຫຼວດສະກັດກັ້ນ ແລະ ຕ້ານຢາເສບຕິດ ແຂວງ, ນະຄອນຫຼວງ ເປັນກໍາມະການ;
8. ຮອງຫົວໜ້າ ພະແນກສາທາລະນະສຸກ ແຂວງ, ນະຄອນຫຼວງ ເປັນກໍາມະການ;
9. ຫົວໜ້າ ຫ້ອງຕໍາຫຼວດ ກອງບັນຊາການປ້ອງກັນຄວາມສະຫງົບ ແຂວງ, ນະຄອນຫຼວງ ເປັນກໍາມະການ;

10. ຮອງຫົວໜ້າຫ້ອງພະລາທິການ ກອງບັນຊາການປ້ອງກັນຄວາມສະຫງົບ ແຂວງ, ນະຄອນຫຼວງ ເປັນກຳມະການ;

11. ຫົວໜ້າ ພະແນກ ກວດກາ ແລະ ຄວບຄຸມ ຢາເສບຕິດ ກອງບັນຊາການປ້ອງກັນຄວາມສະຫງົບ ແຂວງ, ນະຄອນຫຼວງ ເປັນກຳມະການ.

ໂຄງປະກອບບຸກຄະລາກອນ ຂອງ ສະພາບໍລິຫານ ກສຢ ແຂວງ, ນະຄອນຫຼວງ ສາມາດປັບປຸງ, ປ່ຽນແປງໄດ້ ຕາມຄວາມຈຳເປັນ ໂດຍການຕົກລົງ ຂອງຮອງລັດຖະມົນຕີກະຊວງປ້ອງກັນຄວາມສະຫງົບ.

ບຸກຄະລາກອນ ຂອງສະພາບໍລິຫານ ກສຢ ແຂວງ, ນະຄອນຫຼວງ ຈະບໍ່ໄດ້ຮັບເງິນເດືອນ ແລະ ຄ່າແຮງງານຈາກ ກສຢ ໃນການປະຕິບັດໜ້າທີ່ຂອງຕົນ. ສຳລັບ ເບ້ຍປະຊຸມ ແລະ ຄ່າສິ້ນເປືອງຕ່າງໆຂອງກອງປະຊຸມ ໃຫ້ປະຕິບັດຕາມລະບຽບການ ຂອງກະຊວງການເງິນ.

## ມາດຕາ 18 ສິດ ແລະ ໜ້າທີ່ ຂອງສະພາບໍລິຫານກອງທຶນ ຂັ້ນແຂວງ

ສະພາບໍລິຫານ ກສຢ ຂັ້ນແຂວງ ມີສິດ ແລະ ໜ້າທີ່ ຕາມຂອບເຂດຂອງຕົນ ດັ່ງນີ້:

1. ຄຸ້ມຄອງ ແລະ ບໍລິຫານ ກສຢ ຂັ້ນແຂວງ ເພື່ອຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດວາລະແຫ່ງຊາດ, ແຜນຍຸດທະສາດ, ກົດໝາຍ, ນະໂຍບາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

2. ຕົກລົງ ການນຳໃຊ້ ກສຢ ຂັ້ນແຂວງ ໃນຍາມປົກກະຕິ ແລະ ຮີບດ່ວນ ໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;

3. ຮັບຮອງເອົາ ແຜນງົບປະມານ ແລະ ແຜນການເຄື່ອນໄຫວວຽກງານປະຈຳປີ ຂອງ ກສຢ ຂັ້ນແຂວງ ຕາມການສະເໜີຂອງກອງເລຂາ;

4. ຮັບຮອງເອົາ ລະບຽບການ ກ່ຽວກັບການຄຸ້ມຄອງ ແລະ ການເຄື່ອນໄຫວຂອງ ກສຢ ຂັ້ນແຂວງ ຕາມການສະເໜີຂອງກອງເລຂາ;

5. ພິຈາລະນາຮັບຮອງເອົາບົດລາຍງານ ການເຄື່ອນໄຫວ, ແຜນລາຍຮັບ-ລາຍຈ່າຍ ກສຢ ຂັ້ນແຂວງ ຕາມການສະເໜີຂອງກອງເລຂາ;

6. ແຕ່ງຕັ້ງ ກອງເລຂາ ກສຢ ຂັ້ນແຂວງ ແລະ ພະນັກງານຊ່ວຍວຽກ;

7. ລະດົມຂົນຂວາຍ ແລະ ຊອກຫາແຫຼ່ງທຶນຈາກ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ພາຍໃນ ແລະ ຕ່າງປະເທດ;

8. ຕິດຕາມການ ກວດກາ ກວດສອບ ຄຸ້ມຄອງການເຄື່ອນໄຫວ ແລະ ນຳໃຊ້ກອງທຶນ ໃນການບໍລິຫານຈັດການໃຫ້ຖືກຕ້ອງກັບແຜນການ ແລະ ສອດຄ່ອງກັບເປົ້າໝາຍນຳໃຊ້, ມີຄວາມໂປ່ງໃສ ແລະ ມີປະສິດທິຜົນສູງ;

9. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານຂອງ ກສຢ ຂັ້ນແຂວງ ໃຫ້ການນຳຂັ້ນຂອງຕົນ ສອງຄັ້ງ ຕໍ່ປີ;

10. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

## ມາດຕາ 19 ກອງເລຂາກອງທຶນ ຂັ້ນແຂວງ

ກອງເລຂາ ກສຢ ຂັ້ນແຂວງ ຕັ້ງຢູ່ ພະແນກກວດກາ ແລະ ຄວບຄຸມຢາເສບຕິດ ຫ້ອງຕຳຫຼວດ ກອງບັນ ຊາການປ້ອງກັນຄວາມສະຫງົບ ແຂວງ, ນະຄອນຫຼວງ ມີພາລະບົດບາດຊ່ວຍວຽກສະພາບໍລິຫານ ແລະ ຮັບຜິດ ຊອບໂດຍກົງ ໃນການຄຸ້ມຄອງບໍລິຫານ ກສຢ ຂັ້ນແຂວງ.

ກອງເລຂາ ກສຢ ແຂວງ, ນະຄອນຫຼວງ ປະກອບດ້ວຍ ຫົວໜ້າ, ຮອງຫົວໜ້າ ແລະ ພະນັກງານຈຳນວນໜຶ່ງ ຊຶ່ງຖືກແຕ່ງຕັ້ງ ຫຼື ປົດຕຳແໜ່ງ ໂດຍ ສະພາບໍລິຫານ ກສຢ ຂັ້ນແຂວງ ຕາມການສະເໜີຂອງພະແນກ ກວດກາ ແລະ ຄວບຄຸມຢາເສບຕິດ ຫ້ອງຕຳຫຼວດ ກອງບັນຊາການປ້ອງກັນຄວາມສະຫງົບແຂວງ, ນະຄອນຫຼວງ.

ຫົວໜ້າກອງເລຂາ ມີຄວາມຮັບຜິດຊອບໂດຍກົງ ຕໍ່ສະພາບໍລິຫານ ກ່ຽວກັບວຽກງານຄຸ້ມຄອງບໍລິຫານ ກສຢ, ຮອງຫົວໜ້າກອງເລຂາ ເປັນຜູ້ຊ່ວຍຫົວໜ້າກອງເລຂາ ແລະ ມີໜ້າທີ່ລົງເລິກຮັບຜິດຊອບວຽກງານໃດໜຶ່ງ ຕາມການມອບໝາຍຂອງຫົວໜ້າກອງເລຂາ.

**ມາດຕາ 20 ສິດ ແລະ ໜ້າທີ່ ຂອງກອງເລຂາ ກສຢ ຂັ້ນແຂວງ**

ກອງເລຂາ ກສຢ ຂັ້ນແຂວງ ປະຕິບັດສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ເປັນເສນາທິການໃຫ້ສະພາບໍລິຫານໃນການຄຸ້ມຄອງບໍລິຫານ, ການເຄື່ອນໄຫວວຽກງານຂອງ ກສຢ ຂັ້ນແຂວງ;

2. ໂຄສະນາ, ເຜີຍແຜ່ລະບຽບ ກ່ຽວກັບ ກສຢ;

3. ຄົ້ນຄວ້າ, ສ້າງກົດລະບຽບພາຍໃນ, ແຜນການເຄື່ອນໄຫວ ແລະ ແຜນງົບປະມານປະຈໍາປີ ເພື່ອສະເໜີສະພາບໍລິຫານ ກສຢ ຂັ້ນສູນກາງ ພິຈາລະນາ ແລະ ຮັບຮອງ;

4. ມອບລາຍຮັບ ຕາມທີ່ໄດ້ກໍານົດໄວ້ໃນ ຂໍ້ 2 ມາດຕາ 5 ຂອງດໍາລັດສະບັບນີ້ ເຂົ້າ ກສຢ ຂັ້ນສູນກາງ ພາຍໃນກໍານົດ ຫົກສິບວັນ ນັບແຕ່ວັນໄດ້ຮັບເງິນຈາກການປະຕິບັດຄໍາຕັດສິນ ເປັນຕົ້ນໄປ;

5. ຄົ້ນຄວ້າ, ສ້າງແຜນງານ, ໂຄງການ ແລະ ກິດຈະກໍາ ເພື່ອສະເໜີຕໍ່ສະພາບໍລິຫານພິຈາລະນາ ແລະ ຮັບຮອງ;

6. ຈັດຕັ້ງ ກິດຈະກໍາທາງສັງຄົມ, ລະດົມຂົນຂວາຍ ແລະ ຊອກຫາແຫຼ່ງທຶນ ເຂົ້າກອງທຶນ ທີ່ຖືກຕ້ອງຕາມກົດໝາຍ;

7. ຕິດຕາມ ກວດກາ ການເກັບກໍາ, ຂຶ້ນບັນຊີ, ຫ້ອນໂຮມຊັບສິນ ທີ່ກ່ຽວຂ້ອງ ກັບຄະດີຢາເສບຕິດ ທີ່ຖືກຍຶດ, ອາຍັດ ແລະ ຮິບເປັນຂອງລັດ ຕາມຄໍາຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ;

8. ສ້າງກົນໄກປະສານງານ, ປະສານສົມທົບກົມກອງວິຊາສະເພາະ ແລະ ພາກສ່ວນທີ່ກ່ຽວຂ້ອງ ໃນການແບ່ງປັນລາຍຮັບທີ່ໄດ້ຈາກການດໍາເນີນຄະດີ ກ່ຽວກັບຄະດີຢາເສບຕິດ;

9. ບັນທຶກ, ຈົດຮັບ, ຈົດຈ່າຍ ເງິນ ກສຢ ຂັ້ນແຂວງ, ຄຸ້ມຄອງຊັບສິນ, ເງິນສົດ ແລະ ບັນຊີເງິນຝາກຂອງກອງທຶນບໍ່ໃຫ້ຕົກເຮ່ຍເສຍຫາຍ;

10. ເບີກຈ່າຍເງິນ ແລະ ວັດຖຸປະກອນ ເພື່ອສະໜອງໃຫ້ແກ່ກິດຈະກໍາຕ່າງໆ ຕາມແຜນການທີ່ສະພາບໍລິຫານກອງທຶນ ໄດ້ຮັບຮອງ;

11. ເຂົ້າຮ່ວມເປັນຄະນະກໍາມະການ ໃນການປະມູນຂາຍ ຊັບສິນທີ່ຖືກຮິບເປັນຂອງລັດ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;

12. ຕິດຕາມ, ກວດກາປະເມີນຜົນການນໍາໃຊ້ກອງທຶນ;

13. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານຂອງ ກສຢ ຂັ້ນແຂວງ ຕໍ່ສະພາບໍລິຫານ ຢ່າງເປັນປົກກະຕິ;

14. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍ ຂອງສະພາບໍລິຫານກອງທຶນ.

**ມາດຕາ 21 ກອງປະຊຸມສະພາບໍລິຫານ ກສຢ**

ກອງປະຊຸມສາມັນ ຂອງສະພາບໍລິຫານ ຈັດຂຶ້ນປີລະສອງເທື່ອ, ໃນກໍລະນີມີບັນຫາສໍາຄັນທີ່ຕ້ອງໄດ້ປຶກສາຫາລື ແລະ ພິຈາລະນາຕົກລົງດ່ວນ ກໍສາມາດຈັດກອງປະຊຸມວິສາມັນຂຶ້ນໄດ້ທຸກເວລາ ຕາມການຮຽກປະຊຸມຂອງປະທານສະພາບໍລິຫານ ຫຼື ຕາມການສະເໜີຂອງສະມາຊິກສະພາບໍລິຫານ ຫຼາຍກວ່າໜຶ່ງສ່ວນສາມ. ກອງປະຊຸມ ຈະເປີດໄດ້ ກໍຕໍ່ເມື່ອມີສະມາຊິກສະພາບໍລິຫານເຂົ້າຮ່ວມ ຢ່າງໜ້ອຍສອງສ່ວນສາມ ຂອງຈໍານວນສະມາຊິກສະພາບໍລິຫານທັງໝົດ.

ມະຕິກອງປະຊຸມສະພາບໍລິຫານ ຈະມີຜົນນໍາໃຊ້ໄດ້ກໍຕໍ່ເມື່ອໄດ້ຮັບຄະແນນສຽງສ່ວນຫຼາຍຮັບຮອງເອົາ.

## ໝວດທີ 4
## ການເປີດບັນຊີ, ການກວດສອບບັນຊີ ແລະ ການລາຍງານ

**ມາດຕາ 22 ການເປີດບັນຊີເງິນຝາກຂອງກອງທຶນ**

ກສຢ ແຕ່ລະຂັ້ນ ຕ້ອງມີລະບົບບັນຊີທີ່ຖືກຕ້ອງ ຕາມກົດໝາຍວ່າດ້ວຍການບັນຊີ ແລະ ຕ້ອງເປີດບັນຊີເງິນຝາກ ໃນລະບົບຄັງເງິນແຫ່ງຊາດ ແລະ/ຫຼື ທະນາຄານທຸລະກິດ ທີ່ມີຄວາມໝັ້ນຄົງ ແລະ ເຊື່ອຖືໄດ້ຢູ່ ສປປ ລາວ ຕາມການເຫັນດີຂອງຂະແໜງການການເງິນ, ທຸກລາຍຮັບຂອງ ກສຢ ຕ້ອງມອບ ຫຼື ໂອນເຂົ້າບັນຊີເງິນຝາກດັ່ງກ່າວ.

**ມາດຕາ 23 ການກວດສອບບັນຊີ**

ບັນຊີຂອງ ກສຢ ແຕ່ລະຂັ້ນ ຕ້ອງໄດ້ຮັບການກວດສອບທຸກປີ ໂດຍອົງການກວດສອບແຫ່ງລັດ. ຜົນການກວດສອບ ຕ້ອງໄດ້ຮັບການຢັ້ງຢືນໂດຍສະພາບໍລິຫານ ກສຢ ແລະ ລາຍງານໃຫ້ຂັ້ນເທິງຂອງຕົນ ພ້ອມທັງເຜີຍແຜ່ໃຫ້ສາທາລະນະຊົນຮັບຮູ້ ເພື່ອຄວາມໂປ່ງໃສໃນການນຳໃຊ້ເງິນ ຂອງ ກສຢ.

ໃນກໍລະນີ ພົບເຫັນມີການລະເມີດກົດໝາຍ ແລະ ລະບຽບການ ຜູ້ລະເມີດນັ້ນຈະຖືກປະຕິບັດມາດຕະການ ຕາມແຕ່ລະກໍລະນີ ທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 24 ການລາຍງານ**

ກອງເລຂາ ກສຢ ຕ້ອງສັງລວມລາຍງານການເຄື່ອນໄຫວຂອງກອງທຶນ ປະຈຳ ສາມເດືອນ, ຫົກເດືອນ, ເກົ້າເດືອນ ແລະ ປະຈຳປີ ໃຫ້ສະພາບໍລິຫານ ຢ່າງເປັນປົກກະຕິ.

ສະພາບໍລິຫານກອງທຶນ ຕ້ອງລາຍງານການເຄື່ອນໄຫວວຽກງານຂອງ ກສຢ ໃຫ້ລັດຖະມົນຕີກະຊວງປ້ອງກັນຄວາມສະຫງົບ ແລະ ພາກສ່ວນທີ່ກ່ຽວຂ້ອງ ຢ່າງເປັນປົກກະຕິ.

## ໝວດທີ 5
## ການກວດກາ

**ມາດຕາ 25 ການກວດກາ**

ການກວດກາ ແມ່ນ ການປະເມີນການເຄື່ອນໄຫວຂອງ ກສຢ ໂດຍຄະນະກຳມະການກວດກາພາຍໃນ, ສະພາບໍລິຫານ ແລະ ອົງການກວດກາ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ເພື່ອຮັບປະກັນຄວາມໂປ່ງໃສ, ມີປະສິດທິພາບ, ປະສິດທິຜົນ ແລະ ຖືກຕ້ອງ ຕາມກົດໝາຍ ແລະ ລະບຽບການ.

ເນື້ອໃນການກວດກາ ມີດັ່ງນີ້:

1. ກວດກາການຈັດຕັ້ງປະຕິບັດ ແຜນການ, ແຜນງານ ແລະ ໂຄງການກ່ຽວກັບ ກສຢ;
2. ແຫຼ່ງລາຍຮັບ, ການຈັດຕັ້ງປະຕິບັດແຜນລາຍຈ່າຍ ກສຢ;
3. ກວດກາການຈັດຕັ້ງປະຕິບັດວຽກງານກອງເລຂາ ກສຢ ແລະ ການປະຕິບັດນະໂຍບາຍຕ່າງໆ.

**ມາດຕາ 26 ຮູບການກວດກາ**

ການກວດກາ ກສຢ ມີຮູບການ ດັ່ງນີ້:

1. ກວດກາຕາມລະບົບປົກກະຕິ ຊຶ່ງແມ່ນການກວດກາ ທີ່ດຳເນີນໄປຕາມແຜນການ ຢ່າງເປັນປະຈຳ ແລະ ມີກຳນົດເວລາອັນແນ່ນອນ;

2. ກວດກາໂດຍແຈ້ງໃຫ້ຮູ້ລ່ວງໜ້າ ຊຶ່ງແມ່ນການກວດນອກແຜນການ ເມື່ອເຫັນວ່າມີຄວາມຈຳເປັນ ໂດຍແຈ້ງໃຫ້ຜູ້ຖືກກວດກາ ຮູ້ລ່ວງໜ້າ;

3. ກວດກາແບບກະທັນຫັນ ຊຶ່ງແມ່ນການກວດກາໂດຍຮີບດ່ວນ ໂດຍບໍ່ໄດ້ແຈ້ງໃຫ້ຜູ້ຖືກກວດກາ ຮູ້ລ່ວງໜ້າ.

ໃນການດຳເນີນການກວດ ເຈົ້າໜ້າທີ່ກວດກາ ຕ້ອງປະຕິບັດໜ້າທີ່ ໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ ຢ່າງເຂັ້ມງວດ.

## ໝວດທີ 6
## ບົດບັນຍັດສຸດທ້າຍ

### ມາດຕາ 27 ຕາປະທັບ

ກສຢ ມີກາປະທັບເປັນຂອງຕົວເອງ ເພື່ອນຳໃຊ້ເຂົ້າໃນການເຄື່ອນໄຫວວຽກງານທາງລັດຖະການ.

### ມາດຕາ 28 ການຈັດຕັ້ງປະຕິບັດ

ກະຊວງປ້ອງກັນຄວາມສະຫງົບ ເປັນເຈົ້າການໃນການຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດດຳລັດສະບັບນີ້ ໃຫ້ມີປະສິດທິຜົນ.

ກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ປະຕິບັດດຳລັດສະບັບນີ້ ຢ່າງເຂັ້ມງວດ.

### ມາດຕາ 29 ຜົນສັກສິດ

ດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີ 31 ທັນວາ 2024 ເປັນຕົ້ນໄປ.

ຕາງໜ້າ ລັດຖະບານແຫ່ງ ສປປ ລາວ
ນາຍົກລັດຖະມົນຕີ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ນາຍົກລັດຖະມົນຕີ

ສອນໄຊ ສີພັນດອນ